# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ບຸນເຂົ້າຈີ່

(ສະບັດທົດລອງ)



ຂຽນໂດຍ: ອ.ຈ ລຳໄຍ

ຂໍ້ມູນຈາກ: ບ້ານ ຊະນະຄາມ ເມືອງ ຊະນະຄາມ ແຂວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

# ປື້ມຄວາມຮູ້ພູມປັນຍາທ້ອງຖິ່ນ
# ບຸນເຂົ້າຈີ່

ຮີບໂຮມ ແລະຈັດພິມໜ້າໂດຍ: ຄຳຫຼ້າ ພອນມະນີວົງ

ຜູ້ຮຽບຮຽງ: ອ.ຈ. ໂພໄຊ ຈັນທະວົງສາ

ອ.ຈ. ລັ່ງ ແສງດາລາ

ເຈົ້າຂອງ: ຫ້ອງການສຶກສາເມືອງຊະນະຄາມ ແຂວງວຽງຈັນ
ຈັນ ແລະສູນອົບຮົມຮ່ວມພັດທະນາ

Pestalozzi Children's Foundation
A world for children

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ໄດ້ມາຈາກການຊຽນຂອງຊາວບ້ານ ແລະອາສາສະໝັກຊຶ່ງໄດ້ຮຽບຮຽງໃນເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາ ແລະສຶກສາເມືອງຊະນະຄາມ.

ປື້ມຫົວນ້ອຍຫົວນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດນຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປໍ 1 ປໍ 2 ແລະບົດທີ່ຍາກກໍເອົາສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາບກໍໜ້ອຍ.

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫວັງວ່າຈະໄດ້ຮັບການຕິຊົມຈາກທຸກທ່ານພວກເຮົາພ້ອມທີ່ຈະປັບປຸ່ງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ສາລະໜ້າຮູ້

ເມືອງຊະນະຄາມເປັນເມືອງໜຶ່ງທີ່ມີວັດທະນະທຳຄ້າຍຄືກັນກັບເມືອງອື່ນລວມທັງການເຮັດບຸນສິນກິນທານ ແລະປະເພນີຕ່າງໆ ໃນນັ້ນກໍແມ່ນການເຮັດບຸນເຂົ້າຈີ່, ການເຮັດບຸນເຂົ້າຈີ່ມີໃນຊ່ວງໄລຍະເດືອນ 3 ລາວ. ການເຮັດບຸນເຂົ້າຈີ່ແມ່ນເຮັດຕາມຄວາມເຊື່ອຖືຂອງຄົນລາວແຕ່ປູ່ຍາຕາຍາຍ ແລະ ເພິ່ນມັກເຮັດໃນກາງເດືອນ 3 ພ້ອມກັບບຸນມາຄະບູຊາ.

## ຫຼັກການວິທະຍາສາດ

ເຮັດເພື່ອຄະບູຊາພະພຸດທະເຈົ້າຕາມຄວາມເຊື່ອຖືຂອງປູ່ຍ່າຕາຍາຍທີ່ເພິ່ນພາເຮັດມາແຕ່ເກົ່າ.

<u>ເຄື່ອງປະກອບ</u>

1. ເຂົ້າໜຶ້ງ



2. ໄຂ່,ນ້ຳມັນ



PDF created with pdfFactory Pro trial version www.pdffactory.com

3. ໄມ້



ຂັ້ນຕອນການເຮັດ

1. ໜ່າເຂົ້າໃຫ້ໄນ່



2. ເອົາເຂົ້າໄປໜື້ງໃຫ້ສຸກ



PDF created with pdfFactory Pro trial version www.pdffactory.com

3. ເອົາມາເຮັດເປັນປັ້ນກ້ອນນ້ອຍໆພໍດີງາມ ເອົາໄມ້ສຽບໃສ່ ແລ້ວເອົາໄປຂາງໄຟຫຼັງຈາກນັ້ນແມ່ນເອົານ້ຳມັນມາທາພ້ອມ ກັບໄຂ່ທີ່ຕີລະອຽດ. ແລ້ວຂາງໄຟໃຫ້ສຸກແຫ້ມ.



## ກາບ: ບຸນເຂົ້າຈີ່

| | |
|---|---|
| ປັ້ນເຂົ້າຈີ່ | ໄດ້ກິນແລ້ວແຊບ |
| ປັ້ນແຈບໆ | ໃສ່ໄມ້ຂາງໄຟ |
| ນ້ຳມັນໃສ່ | ພ້ອມໄຂ່ທານຳ |
| ເຮັດປະຈຳ | ກັບບຸນເຂົ້າຈີ່ |
| ແມ່ຕູ້ສີ | ຕູ້ສາຕູ້ເຊົ້າ |
| ພວກຜູ້ເຖົ້າ | ນັ່ງອ້ອມເຕົາໄຟ |
| ນຳເອົາໄປ | ຖວາຍໃຫ້ຍ່າພໍ່ |
| ໃຫ້ສືບຕໍ່ | ເປັນປະເພນີ |

PDF created with pdfFactory Pro trial version www.pdffactory.com

# ເຊີ້ງ: ບຸນເຂົ້າຈີ່

ໂອ່ໂຮໂອໂຮະໂອ່ໂຮ່ະໂອ

ມາພວກເຮົາມາ      ພີ່ນ້ອງທັງຫຼາຍ
ທັງຍິງທັງຊາຍ      ເຕົ້າໂຮມໃນວັດ
ມື້ນີ້ເພິ່ນນັດ      ໃນເດືອນສາມເພັງ
ພວກນັ້ນເຮົາເອງ      ໄດ້ປັ້ນເຂົ້າຈີ່
ປັ້ນແລ້ວໄປຈີ່      ໃສ່ໄຂ່ນ້ຳມັນ
ພວດເຮົາພາກັນ      ຂາງໄຟໃຫ້ສຸກ
ເຮົາແສນສະໜຸກ      ທັງກິນທັງເຮັດ
ເມື່ອເຮັດສຳເລັດ      ຖະຫວາຍພຣະສົງ

# ເພງ: ບຸນເຂົ້າຈີ່

ເດືອນສາມເພັງ      ວັນບຸນເຂົ້າຈີ່
ເປັນປະເພນີ      ສືບຕໍ່ກັນມາ
ຊາວປະຊາ      ພ້ອມກັນຮັກສາ
ເດືອນສາມເພັງມາ      ກໍພາກັນເຮັດບຸນ

PDF created with pdfFactory Pro trial version www.pdffactory.com

# ລຳ: ບຸນເຂົ້າຈີ່

| | |
|---|---|
| ເດືອນສາມເພັງ | ນັ້ນເປັນບຸນເຂົ້າຈີ່ |
| ປະເພນີ | ສືບທອດກັນມາ |
| ຜູ້ເຖົ້າພາກັນ | ຊອກຫາ |
| ຫລົວຟືນມາ | ໄວ້ຂາງເຂົ້າຈີ່ |
| ສຳເລັດແລ້ວ | ເອົາໄປໃສ່ບາດ |
| ບໍ່ໃຫ້ຂາດ | ໃນການທຳບຸນ |
| ເພື່ອເປັນສິ່ງ | ທີ່ຄ້ຳຈູນ (X2) |
| ໃຫ້ລູກຫຼານ | ໄດ້ສືບທອດຕໍ່ໄປ |

PDF created with pdfFactory Pro trial version www.pdffactory.com

# <u>ຮູບແລະປະຫວັດຂອງຜູ້ຂຽນ</u>



ຊື່: ອ.ຈ. ລຳໄຍ

ນາມສະກຸນ: ກິດຈະກອນພິດ

ອາຍຸ: 30 ປີ

ອາຊີບ: ຄູສອນ

## <u>ເຫດຜົນຂອງການຫົວຂໍ້ນີ້ບົດນີ້</u>

ເພາະວ່າຍບຸນເຂົ້າຈີ່ແມ່ນບຸນປະເພນີໜຶ່ງທີ່ມີມາແຕ່ປູ່ຍ່າຕາ ຍາຍ ແລະເພີ່ນໄດ້ເຮັດໃນຊ່ວງເດືອນ 3 (ລາວ) ດັ່ງນັ້ນການຂຽນບົດນີ້ຂຶ້ນມາກໍຍ້ອນຢາກໃຫ້ນ້ອງນ້ອຍເຍົາວະຊົນໄດ້ຮຽນຮູ້ເຖິງປະເພນີຂອງລາວ ແລະໄດ້ສືບທອດກັນຕໍ່ມາ.

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com